ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------00------

ກະຊວງການເງິນ

ກົມພາສີ

ເລກທີ 7589 /ກພສ

ນະຄອນຫຼວງວຽງຈັນ,ວັນທີ 08 MAY 2012

# ແຈ້ງການ

**ເຖິງ:** ຫົວໜ້າພາສີປະຈຳເຂດ ແລະ ຫົວໜ້າດ່ານພາສີຊາຍແດນ ໃນທົ່ວປະເທດ.

**ເລື່ອງ:** ໃຫ້ເອົາໃຈໃສ່ໃນການສະກັດກັ້ນການນຳເຂົ້າສິນຄ້າປະເພດໝາກກະໂພກ, ດອກໄມ້ໄຟ ແລະ ອື່ນໆ ທີ່ເປັນວັດຖຸລະເບີດ.

- ອີງຕາມ ມາດຕາ 15 ຂອງກົດໝາຍພາສີ ສະບັບເລກທີ 05/ສພຊ,ລົງວັນທີ 20 ພຶດສະພາ 2005
- ອີງຕາມ ຄຳສັ່ງ ເລກທີ 27/ນຍ ລົງວັນທີ 05 ຕຸລາ 2011 ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ.
- ອີງຕາມ ເອກະສານທາງລັດຖະການຂອງເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 191/ຈນວ ລົງວັນທີ 11 ເມສາ 2012.
- ອີງຕາມ ຄຳເຫັນຊີ້ນຳຂອງລັດຖະມົນຕີວ່າການ ກະຊວງການເງິນ ລົງວັນທີ 20 ເມສາ 2012.

ເພື່ອເຮັດໜ້າທີ່ຕ້ານ ແລະ ສະກັດກັ້ນການລັກລອບ ນຳເຂົ້າສິນຄ້າປະເພດຕ້ອງຫ້າມ ເຂົ້າມາຂາຍພາຍໃນທ້ອງຕະຫຼາດຢ່າງຫຼວງຫຼາຍ ພ້ອມທັງແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ໃຫ້ມີຄວາມສະຫງົບເປັນລະບຽບຮຽບຮ້ອຍ ແລະ ມີຄວາມປອດໄພໂດຍພື້ນຖານ.

ກົມພາສີ ຂໍຖືເປັນກຽດແຈ້ງມາຍັງທ່ານຫົວໜ້າພາສີປະຈຳເຂດ, ຫົວໜ້າດ່ານພາສີຊາຍແດນໃນທົ່ວປະເທດ ໃຫ້ເອົາໃຈໃສ່ຊີ້ນຳ ນຳພາພະນັກງານພາສີປະຈຳຢູ່ດ່ານພາສີຊາຍແດນ ເຂັ້ມງວດໃນການກວດກາສິນຄ້າ ປະເພດຕ້ອງຫ້າມ ເພື່ອຈຳກັດທຸກຮູບແບບໃນການລັກລອບ ສິນຄ້າເຂົ້າມາຈຳໜ່າຍພາຍໃນປະເທດ ໂດຍສະເພາະນະຄອນຫຼວງວຽງຈັນ ເຊັ່ນ ໝາກກະໂພກ, ດອກໄມ້ໄຟ, ວັດຖຸລະເບີດປະ ເພດຕ່າງໆ ຫາກກວດກາພົບເຫັນການນຳ ເຂົ້າສິນຄ້າປະເພດດັ່ງກ່າວ ແມ່ນໃຫ້ດຳເນີນຄະດີຕາມລະບຽບກົດໝາຍ ທີ່ໄດ້ກຳນົດໄວ້.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການ ຫົວໜ້າກົມພາສີ

ສາດສະພັງທອງ ສີພັນດອນ